ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 128 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 11 ເມສາ 2018

# ດຳລັດ

## ວ່າດ້ວຍ ການສ້າງຕັ້ງນະຄອນ ປາກເຊ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບປັບປຸງ ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບປັບປຸງ ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກອງປະຊຸມລັດຖະບານ ສະໄໝສາມັນ ຄັ້ງວັນທີ 24 ຕຸລາ 2017;
- ອີງຕາມ ໜັງສືສະເໜີ ຂອງລັດຖະມົນຕີ ກະຊວງພາຍໃນ ສະບັບເລກທີ 95/ພນ, ລົງວັນທີ 04 ເມສາ 2018.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1** ສ້າງຕັ້ງນະຄອນປາກເຊ ປ່ຽນແທນເມືອງປາກເຊ, ຊຶ່ງເປັນອົງການປົກຄອງທ້ອງຖິ່ນຂັ້ນດຽວກັນກັບຂັ້ນເມືອງ, ຂຶ້ນກັບແຂວງຈຳປາສັກ; ມີເນື້ອທີ່ທັງໝົດ 125 ກິໂລຕາແມັດ, ປະກອບມີ 42 ບ້ານ ແລະ ມີພົນລະເມືອງທັງໝົດ 81.579 ຄົນ, ຍິງ 42.021 ຄົນ;

**ມາດຕາ 2** ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການປົກຄອງນະຄອນປາກເຊ ໄດ້ກຳນົດໄວ້ໃນລະບຽບການສະເພາະ;

**ມາດຕາ 3** ມອບໃຫ້ອົງການປົກຄອງແຂວງຈຳປາສັກ ຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ທົ່ວເຖິງ ແລະ ທັນເວລາ;

**ມາດຕາ 4** ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະຈັດຕັ້ງສູນກາງພັກ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ບັນດາແຂວງ, ນະຄອນຫຼວງວຽງຈັນ ຈົ່ງຮັບຮູ້ ແລະ ປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ;

**ມາດຕາ 5** ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ